ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມເຜີຍແຜ່ "ແບບຟອມລາຍງານການເຄື່ອນໄຫວ ທຸລະກຳການຊຳລະໃຫ້ແກ່ຜູ້ໃຫ້ບໍລິການຊຳລະ"





ໃນວັນທີ 21 ເມສາ 2021 ຜ່ານມານີ້, ທີ່ຫ້ອງປະຊຸມຊັ້ນ VI ຂອງຕຶກ ສຄຄຊ ໄດ້ຈັດກອງປະຊຸມເຜີຍແຜ່ "ແບບຟອມລາຍງານການເຄື່ອນໄຫວທຸລະກຳການຊຳລະໃຫ້ແກ່ຜູ້ໃຫ້ບໍລິການຊຳລະ" ຂຶ້ນໂດຍການເປັນປະທານຂອງທ່ານ ສຸລິສັກ ທຳນຸວົງ, ຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງ, ມີພາກສ່ວນເຂົ້າຮ່ວມທີ່ມາຈາກທະນາຄານທຸລະກິດ, ບໍລິສັດ, ນິຕິບຸກຄົນ ແລະ ວິຊາການພາຍໃນກົມເຂົ້າຮ່ວມຈຳນວນ 70 ທ່ານ.

ກອງປະຊຸມເຜີຍແຜ່ໃນຄັ້ງນີ້, ກົມຄຸ້ມຄອງລະບົບຊຳລະສະສາງ (ຄລຊ) ກໍ່ຄື ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ບັນດາທະນາຄານທຸລະກິດ ແລະ ນິຕິບຸກຄົນ ຈຳນວນຫຼາຍແຫ່ງ ເປັນຜູ້ໃຫ້ບໍລິການຊຳລະ ແຕ່ໃນຂອດການຕິດຕາມກວດກາ ແມ່ນຍັງບໍ່ທັນມີການຈັດຕັ້ງປະຕິບັດຢ່າງເປັນລະບົບເທື່ອ ໂດຍສະເພາະແມ່ນການປະຕິບັດລະບອບລາຍງານຂອງຜູ້ໃຫ້ບໍລິການຊຳລະ ເຊິ່ງໄດ້ລາຍງານສະເພາະການໃຫ້ບໍລິການຊຳລະທີ່ໄດ້ຮັບອະນຸຍາດພາຍຫຼັງສ້າງຕັ້ງ ຄລຊ ເທົ່ານັ້ນ ເຊິ່ງເຮັດໃຫ້ການຄຸ້ມຄອງຕິດຕາມກວດກາ, ຂອດການລາຍງານ ແລະ ການເກັບກຳຂໍ້ມູນການເຄື່ອນໄຫວທຸລະກຳການຊຳລະ ຍັງມີຄວາມຫຍຸ້ງຍາກສັບສົນພໍສົມຄວນ ແລະ ຄລຊ ໃນຖານະທີ່ເປັນຜູ້ຄຸ້ມຄອງ ກໍ່ບໍ່ສາມາດຕິດຕາມໄດ້ທ່າອ່ຽງໃນການພັດທະນາຂອງການໃຫ້ບໍລິການຊຳລະ, ບໍ່ມີຂໍ້ມູນພຽງພໍໃນການວາງນະໂຍບາຍການຊຳລະ ແລະ ລາຍງານຂັ້ນເທິງໄດ້ຕາມເປົ້າໝາຍ. ຍ້ອນສະພາບຄືດັ່ງກ່າວ, ຄລຊ ຈຶ່ງໄດ້ມີການຄົ້ນຄວ້າ ແລະ ອອກແບບແບບຟອມລາຍງານການ ເຄື່ອນໄຫວທຸລະກຳຊຳລະ ເພື່ອໃຫ້ຜູ້ໃຫ້ບໍລິການຊຳລະໄດ້ມີການປະຕິບັດລະບອບລາຍງານເປັນລະບົບຢ່າງເປັນປົກກະຕິ ແລະ ໄດ້ມີການທາບທາມຄຳເຫັນຂອງບັນດາທ່ານ ໃນທ້າຍປີ 2020 ທີ່ຜ່ານມາ. ມາຮອດປັດຈຸບັນ, ແບບຟອມດັ່ງກ່າວ ແມ່ນໄດ້ຮັບການຮັບຮອງຈາກ ທ່ານຜູ້ວ່າການ ທຫລ ແລ້ວ. ດັ່ງນັ້ນ, ເພື່ອສ້າງຄວາມເຂົ້າໃຈໃຫ້ແກ່ຜູ້ໃຫ້ບໍລິການຊຳລະ ແລະ ເຮັດໃຫ້ການຈັດຕັ້ງປະຕິບັດແບບຟອມລາຍງານມີຄວາມເປັນເອກະພາບ, ໄປໃນລວງດຽວກັນທົ່ວລະບົບ ແລະ ຮັບປະກັນ ຜູ້ໃຫ້ບໍລິການຊຳລະສະໜອງຂໍ້ມູນໃຫ້ຖືກຕາມຈຸດປະສົງ, ມີຄວາມເຂົ້າໃຈແຈ້ງກ່ອນການນຳໃຊ້ ແລະ ຈັດຕັ້ງປະຕິບັດຕົວຈິງ, ຄລຊ ຈຶ່ງໄດ້ຈັດກອງປະຊຸມຄັ້ງນີ້ຂຶ້ນເພື່ອເປັນເວທີໃຫ້ບັນດາທ່ານໄດ້ຮັບຟັງການເຜີຍແຜ່ເນື້ອໃນຈິດໃຈຂອງການປະຕິບັດລະບອບລາຍງານລວມເຖິງການອະທິບາຍວິທີການຈັດຕັ້ງປະຕິບັດຕົວຈິງໃນການຕື່ມແບບຟອມລາຍງານໃຫ້ຈະແຈ້ງຂຶ້ນຕື່ມ.

**# ຂ່າວ-ພາບ: ທ. ສົມພົດ ທຳມະວົງ**